ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 529 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 01 ກໍລະກົດ 2016

# ຂໍ້ຕົກລົງ
# ວ່າດ້ວຍ ການດຳເນີນທຸລະກິດແລກປ່ຽນເງິນຕາ

– ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດເງື່ອນໄຂການສ້າງຕັ້ງ, ຂອບເຂດການເຄື່ອນໄຫວກ່ຽວກັບການດຳເນີນທຸລະກິດແລກປ່ຽນເງິນຕາ ເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ແນໃສ່ເຮັດໃຫ້ການເຄື່ອນໄຫວທຸລະກິດແລກປ່ຽນເງິນຕາ ມີປະສິດທິຜົນ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ປະກອບສ່ວນເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ ຢູ່ໃນ ສປປ ລາວ ໃຫ້ມີປະສິດທິຜົນ.

**ມາດຕາ 2 ທຸລະກິດແລກປ່ຽນເງິນຕາ**

ທຸລະກິດແລກປ່ຽນເງິນຕາ ແມ່ນການເຄື່ອນໄຫວທຸລະກິດ ກ່ຽວກັບທຸລະກຳການຊື້-ຂາຍເງິນຕາ ຂອງຮ້ານແລກປ່ຽນ ເງິນຕາ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

- **ເງິນຕາ** ໝາຍເຖິງ ເງິນກີບ ແລະ ເງິນຕາຕ່າງປະເທດ;
- **ເງິນສົດ** ໝາຍເຖິງ ທະນະບັດ, ຫຼຽນ ແລະ ແຊັກເດີນທາງ;
- **ການດຳເນີນທຸລະກຳຊື້ເງິນຕາແຕ່ດ້ານດຽວ** ໝາຍເຖິງ ຮ້ານແລກປ່ຽນເງິນຕາ ທີ່ດຳເນີນທຸລະກຳຊື້ເງິນຕາຕ່າງປະເທດຈາກມວນຊົນ ໂດຍບໍ່ມີການສະໜອງເງິນຕາຕ່າງປະເທດ;
- **ການດຳເນີນທຸລະກຳຂາຍເງິນຕາແຕ່ດ້ານດຽວ** ໝາຍເຖິງ ຮ້ານແລກປ່ຽນເງິນຕາ ທີ່ດຳເນີນທຸລະກຳຂາຍເງິນຕາຕ່າງປະເທດໃຫ້ແກ່ມວນຊົນ ໂດຍບໍ່ມີການເກັບຊື້ເງິນຕາ;

- **ນິຕິບຸກຄົນ ທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ** ໝາຍເຖິງ ນິຕິບຸກຄົນ ທີ່ມາຈາກການລົງທຶນຈາກຕ່າງປະເທດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເປັນຕົ້ນ ທຸລະກິດການໂຮງແຮມ ແລະ ທຸລະກິດອື່ນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ

**ມາດຕາ 5 ເງື່ອນໄຂການສະເໜີຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ**

ຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງປະກອບມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນສັນຊາດລາວ (ມີອາຍຸ 23 ປີ ຂຶ້ນໄປ) ຫຼື ນິຕິບຸກຄົນທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ ຢູ່ ສປປ ລາວ;
2. ມີຄວາມຮູ້ ຫຼື ປະສົບການດ້ານການເງິນ ຫຼື ທຸລະກິດໃດໜຶ່ງ;
3. ມີທຶນຈົດທະບຽນຖືກຕ້ອງຕາມກົດໝາຍ ແລະ ຄົບຖ້ວນ ຕາມມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;
4. ມີສະຖານທີ່ຕັ້ງທີ່ເໝາະສົມ ສຳລັບການບໍລິການແລກປ່ຽນເງິນຕາ;
5. ມີແຜນປະກອບອຸປະກອນຮັບໃຊ້ ເພື່ອອຳນວຍຄວາມສະດວກໃນການແລກປ່ຽນເງິນຕາ ເຊັ່ນ: ຄອມພິວເຕີ ແລະ ອິນເຕີເນັດ, ລະບົບລາຍງານການຊື້-ຂາຍເງິນຕາ, ເຄື່ອງອ່ານບັດ ແລະ ກ້ອງວົງຈອນປິດ ທີ່ເຊື່ອມໂຍງກັບລະບົບເຄືອຂ່າຍຕິດຕາມການຊື້-ຂາຍເງິນຕາ ຂອງທະນາຄານແຫ່ງ ສປປ ລາວ, ໂທລະສານ, ເຄື່ອງສຳເນົາເອກະສານ, ເຄື່ອງກວດເງິນ, ເຄື່ອງຈັກນັບເງິນ, ເຄື່ອງຄິດໄລ່, ກະດານແຈ້ງອັດຕາແລກປ່ຽນ ແລະ ອຸປະກອນຮັບໃຊ້ອື່ນ;
6. ບໍ່ເຄີຍຖືກສານຕັດສິນລົງໂທດ ຫຼື ກຳລັງຖືກດຳເນີນຄະດີ ໃນສະຖານການກະທຳຜິດໃດໜຶ່ງ;
7. ບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາມາກ່ອນ.

**ມາດຕາ 6 ການຍື່ນສຳນວນຄຳຮ້ອງ**

ບຸກຄົນລາວ, ນິຕິບຸກຄົນລາວ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ ທີ່ມີຈຸດປະສົງດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງຍື່ນສຳນວນຄຳຮ້ອງຜ່ານຫ້ອງການລົງທຶນປະຕູດຽວຂອງກົດຈະການທົ່ວໄປ ຢູ່ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ນຳທະນາຄານແຫ່ງ ສປປ ລາວ ໂດຍປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດສ້າງຕັ້ງຮ້ານແລກປ່ຽນເງິນຕາ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ຊີວະປະຫວັດຫຍໍ້;
3. ໃບຢັ້ງຢືນທີ່ຢູ່;
4. ໃບແຈ້ງໂທດ (ບໍ່ເກີນ 90 ວັນ);
5. ສຳເນົາບັດປະຈຳຕົວ;
6. ສຳເນົາສຳມະໂນຄົວ;
7. ໃບຢັ້ງຢືນຖານະການເງິນ ແລະ ໃບລາຍງານບັນຊີສຳຮອງ ຢູ່ທະນາຄານ ທີ່ມີການເຄື່ອນໄຫວຍ້ອນຫຼັງໄລຍະ 90 ວັນ ຂຶ້ນໄປ;
8. ສຳເນົາໃບທະບຽນວິສາຫະກິດ (ກໍລະນີເປັນນິຕິບຸກຄົນ);
9. ສຳເນົາໃບທະບຽນອາກອນ (ກໍລະນີເປັນນິຕິບຸກຄົນ);
10. ແຜນປະກອບພະນັກງານ;

11. ແຜນອຸປະກອນຮັບໃຊ້;
12. ໃບຢັ້ງຢືນທີ່ຕັ້ງ ແລະ ແຜນວາດສະຖານທີ່ຕັ້ງຂອງຮ້ານ ຈາກອົງການປົກຄອງບ້ານ;
13. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
14. ຮູບຖ່າຍຂອງຜູ້ສະເໜີ ຂະໜາດ 3x4 ຈຳນວນ 3 ໃບ (ບໍ່ເກີນ 90 ວັນ).

**ມາດຕາ 7 ການພິຈາລະນາການສະເໜີຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ**

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າ ແລະ ແຈ້ງຕອບຜົນການພິຈາລະນາການສະເໜີຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ພາຍໃນກຳນົດເວລາ 15 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ທະນາຄານແຫ່ງ ສປປ ລາວ ຈະບໍ່ອອກໃບອະນຸຍາດໃຫ້ແກ່ຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດ ທີ່ບໍ່ສາມາດປະຕິບັດຕາມເງື່ອນໄຂ ແລະ/ຫຼື ປະກອບເອກະສານບໍ່ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 5 ແລະ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ຈະແຈ້ງຕອບການປະຕິເສດ ພ້ອມທັງເຫດຜົນຢ່າງເປັນລາຍລັກອັກສອນ ແລະ ສົ່ງເອກະສານທີ່ໄດ້ປະກອບທັງໝົດ ຄືນໃຫ້ຜູ້ສະເໜີ.

ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາແລ້ວ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ເລີ່ມເຄື່ອນໄຫວທຸລະກິດພາຍໃນກຳນົດເວລາ 90 ວັນ ນັບແຕ່ວັນທີ່ໄດ້ຮັບໃບທະບຽນວິສາຫະກິດເປັນຕົ້ນໄປ.

ຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາທີ່ຖືກປະຕິເສດ ສາມາດຍື່ນສຳນວນຄຳຮ້ອງ ແລະ ປະກອບເອກະສານຄືນໃໝ່ ພ້ອມທັງຊີ້ແຈງເຫດຜົນ ເຖິງທະນາຄານແຫ່ງ ສປປ ລາວ ເພື່ອຄົ້ນຄວ້າພິຈາລະນາຄືນ ບົນພື້ນຖານເງື່ອນ ໄຂ ແລະ ການປະກອບເອກະສານທີ່ກຳນົດໄວ້ໃນມາດຕາ 5 ແລະ 6 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 8 ການຕໍ່ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ**

ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ມີຜົນນຳໃຊ້ໄດ້ໃນໄລຍະເວລາ 1 ປີ ນັບແຕ່ເດືອນມັງກອນ ເຖິງເດືອນທັນວາ ຂອງທຸກໆປີ.

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງສະເໜີຂໍຕໍ່ໃບອະນຸຍາດດຳເນີນທຸລະກິດ ນຳທະນາຄານແຫ່ງ ສປປ ລາວ ໂດຍປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ປະຈຳປີ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
5. ເອກະສານລາຍງານການເງິນ ປະຈຳປີ ຫຼື ບົດສະຫຼຸບບັນຊີ ປະຈຳປີ;
6. ໃບລາຍງານບັນຊີສຳຮອງ ຢູ່ທະນາຄານ ທີ່ມີການເຄື່ອນໄຫວໄລຍະ 1 ປີ ຍ້ອນຫຼັງ;
7. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
8. ຮູບຖ່າຍຂອງຜູ້ສະເໜີ ຂະໜາດ 3x4 ຈຳນວນ 2 ໃບ (ບໍ່ເກີນ 90 ວັນ).

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າພິຈາລະນາການຕໍ່ໃບອະນຸຍາດດຳເນີນທຸລະກິດ ໃຫ້ແກ່ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ທີ່ປະຕິບັດຕາມລະບຽບການ ແລະ ດຳເນີນທຸລະກິດຂາດທຶນບໍ່ເກີນ 10 (ສິບສ່ວນຮ້ອຍ) ຂອງທຶນຈົດທະບຽນ ໃນແຕ່ລະປີ ແລະ ຈະແຈ້ງຕອບຜົນການຄົ້ນຄວ້າຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ 5 ວັນລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

**ມາດຕາ 9  ຄ່າທຳນຽມ**

ຜູ້ສະເໜີຂໍອະນຸຍາດ ຫຼື ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງເສຍຄ່າທຳນຽມໃນການອອກໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຈຳນວນ 100.000 ກີບ ຕໍ່ຊຸດ;
2. ການອອກໃບອະນຸຍາດດຳເນີນທຸລະກິດໃໝ່ ຈຳນວນ 0,05 (ສູນຈຸດສູນຫ້າສ່ວນຮ້ອຍ) ຂອງທຶນຈົດທະບຽນ, ແຕ່ສູງສຸດ ບໍ່ເກີນ 1.500.000 ກີບ (ໜຶ່ງລ້ານຫ້າແສນກີບ);
3. ການຕໍ່ໃບອະນຸຍາດດຳເນີນທຸລະກິດປະຈຳປີ ຈຳນວນ 500.000 ກີບ.

**ມາດຕາ 10  ການໂຈະ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ສາມາດສະເໜີຂໍໂຈະການດຳເນີນທຸລະກິດຊົ່ວຄາວ ພາຍໃນກຳນົດເວລາ 90 ວັນ ໂດຍຕ້ອງມີເຫດຜົນຢັ້ງຢືນຄວາມຈຳເປັນໃນການໂຈະ ແລະ ຖ້າເກີນກຳນົດເວລາດັ່ງກ່າວ ຫາກບໍ່ມີການເປີດບໍລິການຄືນ ແມ່ນຈະຖືກຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ.

ທະນາຄານແຫ່ງ ສປປ ລາວ ຈະຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນກໍລະນີດັ່ງນີ້:

1. ບໍ່ແຈ້ງຂຶ້ນທະບຽນວິສາຫະກິດ ແລະ/ຫຼື ທະບຽນອາກອນ ພາຍໃນກຳນົດເວລາ 90 ວັນ, ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ເປັນຕົ້ນໄປ;
2. ບໍ່ດຳເນີນທຸລະກິດແລກປ່ຽນເງິນຕາ ເປັນເວລາ 90 ວັນຕິດຕໍ່ກັນ ໂດຍບໍ່ມີເຫດຜົນ;
3. ໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໝົດອາຍຸເກີນ 90 ວັນ;
4. ບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂໃນການຕໍ່ໃບອະນຸຍາດດຳເນີນທຸລະກິດ;
5. ຖືກປະຕິບັດມາດຕະການປັບໃໝແລ້ວ ແຕ່ຍັງສືບຕໍ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ຜູ້ດຳເນີນທຸລະກິດ ຂໍຍຸບເລີກດ້ວຍຄວາມສະໝັກໃຈ.

## ໝວດທີ 3
## ທຶນຈົດທະບຽນ

**ມາດຕາ 11  ທຶນຈົດທະບຽນ**

ການດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງປະກອບທຶນຈົດທະບຽນ ຈຳນວນ 1.000.000.000 ກີບ (ໜຶ່ງຕື້ກີບ). ທຶນທີ່ຈະປະກອບເປັນທຶນຈົດທະບຽນ ແມ່ນເປັນທຶນໝູນວຽນເທົ່ານັ້ນ ແລະ ຕ້ອງຝາກໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ.

**ມາດຕາ 12  ການນຳໃຊ້ທຶນຈົດທະບຽນ**

ທຶນຈົດທະບຽນ ສາມາດຖອນ ແລະ ນຳໃຊ້ ເພື່ອດຳເນີນທຸລະກິດແລກປ່ຽນເງິນຕາ ນັບແຕ່ວັນທີ່ທະນາຄານແຫ່ງ ສປປ ລາວ ອອກໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ເປັນຕົ້ນໄປ. ທຶນຈົດທະບຽນດັ່ງກ່າວ ຕ້ອງນຳໃຊ້ເຂົ້າໃນການບໍລິການຊື້-ຂາຍເງິນຕາເທົ່ານັ້ນ.

**ມາດຕາ 13  ການເພີ່ມທຶນຈົດທະບຽນ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ສາມາດເພີ່ມທຶນຈົດທະບຽນໄດ້ ຕາມການເຫັນດີ ຈາກທະນາຄານແຫ່ງ ສປປ ລາວ ໂດຍປະກອບສຳນວນເອກະສານ ເພື່ອສະເໜີຂໍເພີ່ມທຶນຈົດທະບຽນ ດັ່ງນີ້:

1. ໃບຄຳຮ້ອງ ຂໍເພີ່ມທຶນຈົດທະບຽນ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ປະຈຳປີ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
5. ເອກະສານລາຍງານການເງິນ ປະຈຳປີ ຫຼື ບົດສະຫຼຸບບັນຊີ ປະຈຳປີ;
6. ໃບລາຍງານບັນຊີສຳຮອງ ຢູ່ທະນາຄານ ທີ່ມີການເຄື່ອນໄຫວໄລຍະ 1 ປີ ຍ້ອນຫຼັງ;
7. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
8. ຮູບຖ່າຍຂອງຜູ້ສະເໜີ ຂະໜາດ 3x4 ຈຳນວນ 2 ໃບ (ບໍ່ໃຫ້ກາຍ 90 ວັນ).

## ໝວດທີ 4
## ການເຄື່ອນໄຫວທຸລະກິດແລກປ່ຽນເງິນຕາ

### ມາດຕາ 14 ການຊື້-ຂາຍເງິນຕາຕ່າງປະເທດ

ຮ້ານແລກປ່ຽນເງິນຕາ ສາມາດຊື້-ຂາຍເງິນຕາຕ່າງປະເທດ ກັບມວນຊົນ ຫຼື ທະນາຄານທຸລະກິດ ຢູ່ ສປປ ລາວ ຫຼື ທະນາຄານແຫ່ງ ສປປ ລາວ ຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

ການຊື້-ຂາຍເງິນຕາແຕ່ລະຄັ້ງ ຕ້ອງປະຕິບັດການຊື້-ຂາຍຜ່ານເງິນກີບ ແລະ ຕ້ອງມີໃບບິນຊື້-ຂາຍ ໃຫ້ລູກຄ້າ ຈຳນວນ 1 ໃບ ແລະ ຮ້ານແລກປ່ຽນເງິນຕາເກັບຮັກສາໄວ້ ຈຳນວນ 1 ໃບ.

ໃບບິນຊື້-ຂາຍເງິນຕາ ຕ້ອງລະບຸຊື່, ທີ່ຢູ່ ແລະ ເບີຕິດຕໍ່ຂອງຮ້ານແລກປ່ຽນເງິນຕາ. ການຊື້-ຂາຍເງິນຕາກັບລູກຄ້າແຕ່ລະຄັ້ງ ຕ້ອງລະບຸ ວັນທີ, ເດືອນ, ປີ, ຊື່, ນາມສະກຸນ ແລະ ທີ່ຢູ່ ຂອງລູກຄ້າ, ຈຳນວນເງິນ, ສະກຸນເງິນ ແລະ ປະເພດ ໃບເງິນ, ອັດຕາແລກປ່ຽນ ແລະ ຈຳນວນເງິນທີ່ໄດ້ຮັບຈາກການແລກປ່ຽນ. ກໍລະນີ ຊື້ແຊັກເດີນທາງ ຕ້ອງສຳເນົາໃບແຊັກ ແລະ ໜັງສືຜ່ານແດນ ຫຼື ເອກະສານການເດີນທາງ ຂອງຜູ້ກ່ຽວທີ່ມີຮູບຕິດ.

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ສາມາດອອກແບບ ແລະ ກຳນົດໃບບິນຊື້-ຂາຍເງິນຕາ ຂອງຕົນ ໂດຍໄດ້ຮັບການຮັບຮອງຈາກກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ແລະ ຕ້ອງໄດ້ຮັບການເຫັນດີຈາກ ກົມສ່ວຍສາອາກອນ ກະຊວງການເງິນ.

### ມາດຕາ 15 ສິດຂອງຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີສິດ ດັ່ງນີ້:

1. ກຳນົດອັດຕາແລກປ່ຽນຊື້-ຂາຍເງິນຕາແຕ່ລະສະກຸນເງິນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
2. ຊື້-ຂາຍເງິນຕາກັບມວນຊົນ ໄດ້ທັງເງິນສົດ ແລະ ເງິນໂອນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
3. ຊື້-ຂາຍເງິນຕາ ກັບທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ໄດ້ທັງເງິນສົດ ແລະ ເງິນໂອນ;
4. ຊື້-ຂາຍເງິນຕາ ກັບທະນາຄານແຫ່ງ ສປປ ລາວ ໄດ້ທັງເງິນສົດ ແລະ ເງິນໂອນ ໃນກໍລະນີທີ່ມີການລາຍງານການຊື້-ຂາຍເງິນຕາກັບລູກຄ້າປະຈຳວັນຢ່າງເປັນປົກກະຕິ ໃຫ້ທະນາຄານແຫ່ງ ສປປ ລາວ ແລະ ປະຕິບັດຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
5. ສະເໜີຂໍຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາຂອງຕົນ ເຖິງພາກສ່ວນກ່ຽວຂ້ອງ ຢ່າງເປັນລາຍລັກອັກສອນ;
6. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 16 ໜ້າທີ່ຂອງຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີໜ້າທີ່ ດັ່ງນີ້:

1. ຕິດປ້າຍຊື່ຮ້ານແລກປ່ຽນເງິນຕາ ຕາມລະບຽບການທີ່ຂະແໜງການກ່ຽວຂ້ອງໄດ້ກຳນົດໄວ້;
2. ຕິດໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ຂອງຕົນໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ;
3. ກຳນົດອັດຕາແລກປ່ຽນ ແລະ ປະຕິບັດການແລກປ່ຽນເງິນຕາ ໃຫ້ສອດຄ່ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
4. ຕິດປະກາດອັດຕາແລກປ່ຽນຊື້-ຂາຍເງິນຕາແຕ່ລະສະກຸນເງິນ ໄວ້ບ່ອນເປີດເຜີຍ ແລະ ເຫັນໄດ້ງ່າຍ;
5. ບັນທຶກການຊື້-ຂາຍເງິນຕາປະຈຳວັນ ໂດຍລະບຸລາຍລະອຽດຕາມໃບບິນຊື້-ຂາຍເງິນຕາແຕ່ລະສະກຸນເງິນຢ່າງຖືກຕ້ອງ;
6. ເປີດບັນຊີເງິນຝາກໃນນາມຂອງຮ້ານແລກປ່ຽນເງິນຕາ ທັງເປັນເງິນກີບ ແລະ ເງິນຕາຕ່າງປະເທດ ໄວ້ນຳທະນາຄານທຸລະກິດ ເພື່ອນຳໃຊ້ສະເພາະການດຳເນີນທຸລະກິດແລກປ່ຽນເງິນຕາ;
7. ສ້າງລະບົບບັນຊີສະເພາະ ເພື່ອຮັບໃຊ້ການດຳເນີນທຸລະກິດແລກປ່ຽນເງິນຕາ;
8. ປະຕິບັດພັນທະອາກອນຕາມລະບຽບການຂອງພາກສ່ວນກ່ຽວຂ້ອງ;
9. ຮັບຜິດຊອບຄ່າຕິດຕັ້ງລະບົບລາຍງານການຊື້-ຂາຍເງິນຕາຄົບຊຸດ ຕາມລະບຽບການທີ່ພາກສ່ວນກ່ຽວຂ້ອງກຳນົດ;
10. ລາຍງານເຈົ້າໜ້າທີ່ກ່ຽວຂ້ອງຊາບ ກໍລະນີຫາກກວດພົບເງິນປອມ ຫຼື ເງິນ ທີ່ສົງໄສວ່າແມ່ນເງິນປອມ, ພ້ອມທັງ ຮັກສາເງິນປອມນັ້ນໄວ້ ເພື່ອເປັນຫຼັກຖານໃນການດຳເນີນຄະດີ;
11. ລາຍງານການດຳເນີນທຸລະກິດຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ຢ່າງເປັນປົກກະຕິ;
12. ສະຫຼຸບລາຍງານການຊື້-ຂາຍເງິນຕາກັບລູກຄ້າປະຈຳວັນ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ,
13. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 17 ການບັນຊີ**

ຮ້ານແລກປ່ຽນເງິນຕາ ຕ້ອງຖືບັນຊີ ຕິດຕາມການດຳເນີນທຸລະກິດແລກປ່ຽນເງິນຕາ ແລະ ບັນຊີລາຍຮັບ-ລາຍຈ່າຍທຸລະກິດ ຕາມຫຼັກການບັນຊີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ.

**ມາດຕາ 18 ການລາຍງານ**

ຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ຕ້ອງປະຕິບັດການລາຍງານໃຫ້ກົມນະໂຍບາຍເງິນຕາ ສຳລັບຮ້ານແລກປ່ຽນເງິນຕາ ທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ໃຫ້ທະນາຄານແຫ່ງ ສປປ ລາວ ສາຂາພາກ ສຳລັບຮ້ານແລກປ່ຽນເງິນຕາ ທີ່ຕັ້ງຢູ່ຕ່າງແຂວງ ດັ່ງນີ້:

1. ລາຍງານອັດຕາແລກປ່ຽນຊື້-ຂາຍເງິນຕາ ແຕ່ລະສະກຸນເງິນ ກ່ອນເວລາ 10:00 ໂມງ ຂອງແຕ່ລະວັນ;
2. ສະຫຼຸບລາຍງານການຊື້-ຂາຍເງິນຕາປະຈຳວັນ ຕາມແບບລາຍງານທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້ ກ່ອນເວລາ 16:00 ໂມງ ຂອງແຕ່ລະວັນ;
3. ລາຍງານການຊື້-ຂາຍເງິນຕາ ທີ່ມີວົງເງິນຈຳນວນຫຼາຍ ຫຼື ມີລັກສະນະສົງໄສວ່າ ກ່ຽວຂ້ອງກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ຊາບ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ຂໍ້ຫ້າມ**

ຫ້າມຜູ້ດຳເນີນທຸລະກິດແລກປ່ຽນເງິນຕາ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການແລກປ່ຽນຊື້-ຂາຍເງິນຕາ ນອກສະຖານທີ່ ຫຼື ໃຫ້ບໍລິການດ້ານອື່ນ ນອກຈາກທີ່ໄດ້ກໍານົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;
2. ຊື້-ຂາຍເງິນຕາຕ່າງປະເທດ ບໍ່ຖືກຕ້ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວໄດ້ກໍານົດອອກ;
3. ເປີດບັນຊີເງິນຝາກຢູ່ຕ່າງປະເທດ;
4. ດໍາເນີນທຸລະກິດແລກປ່ຽນເງິນຕາ ໂດຍໃບອະນຸຍາດດໍາເນີນທຸລະກິດ ໝົດອາຍຸເກີນ 30 ວັນ;
5. ດໍາເນີນທຸລະກໍາຊື້ ຫຼື ຂາຍເງິນຕາແຕ່ດ້ານດຽວ;
6. ກໍານົດ, ຕິດປະກາດ ແລະ ປະຕິບັດ ອັດຕາແລກປ່ຽນ ບໍ່ຖືກຕ້ອງຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກໍານົດ;
7. ຂາດການລາຍງານການຊື້-ຂາຍເງິນຕາ ຕິດຕໍ່ກັນເກີນ 1 ວັນລັດຖະການ;
8. ຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ;
9. ມອບໃບອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາຂອງຕົນໃຫ້ບຸກຄົນອື່ນຢືມ ເພື່ອນໍາໃຊ້ໃນຈຸດປະສົງໃດ ກໍ ຕາມ;
10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 20 ມາດຕະການສຶກສາອົບຮົມ**

ຜູ້ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາ ທີ່ລະເມີດມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ເປັນຄັ້ງທໍາອິດ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ ຈາກພາກສ່ວນກ່ຽວຂ້ອງ ພ້ອມທັງເຮັດບົດບັນທຶກເປັນລາຍລັກອັກສອນ.

**ມາດຕາ 21 ມາດຕະການປັບໃໝ**

ຜູ້ດໍາເນີນທຸລະກິດແລກປ່ຽນເງິນຕາ ທີ່ໄດ້ຖືກປະຕິບັດມາດຕະການສຶກສາອົບຮົມແລ້ວ ແຕ່ຍັງສືບຕໍ່ລະເມີດຂໍ້ຕົກ ລົງສະບັບນີ້ ຈະຖືກປະຕິບັດມາດຕະການປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ບໍລິການແລກປ່ຽນຊື້-ຂາຍເງິນຕານອກສະຖານທີ່ ຫຼື ໃຫ້ບໍລິການດ້ານອື່ນ ນອກຈາກທີ່ໄດ້ກໍານົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 10.000.000 ກີບ (ສິບລ້ານກີບ) ຕໍ່ຄັ້ງ;
2. ຊື້-ຂາຍເງິນຕາຕ່າງປະເທດ ບໍ່ຖືກຕ້ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ໄດ້ກໍານົດອອກ ຈະຖືກປັບໃໝ 15.000.000 ກີບ(ສິບຫ້າລ້ານກີບ);
3. ເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຈະຖືກປັບໃໝ 20.000.000 ກີບ (ຊາວລ້ານກີບ);
4. ດໍາເນີນທຸລະກິດແລກປ່ຽນເງິນຕາ ໂດຍໃບອະນຸຍາດດໍາເນີນທຸລະກິດ ໝົດອາຍຸເກີນ 60 ວັນ ຈະຖືກປັບໃໝ 30.000.000 ກີບ (ສາມສິບລ້ານກີບ) ຕໍ່ຄັ້ງ;
5. ດໍາເນີນທຸລະກໍາຊື້ ຫຼື ຂາຍເງິນຕາແຕ່ດ້ານດຽວ ຈະຖືກປັບໃໝ 5.000.000 ກີບ (ຫ້າລ້ານກີບ);
6. ກໍານົດ, ຕິດປະກາດ ແລະ ປະຕິບັດ ອັດຕາແລກປ່ຽນ ທີ່ບໍ່ຖືກຕ້ອງຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກໍານົດ ຈະຖືກປັບໃໝ 5.000.000 ກີບ (ຫ້າລ້ານກີບ) ຕໍ່ຄັ້ງ;
7. ຂາດການລາຍງານການຊື້-ຂາຍເງິນຕາ ຕິດຕໍ່ກັນ 3 ວັນລັດຖະການ ຈະຖືກປັບໃໝ 1.000.000 ກີບ (ໜຶ່ງລ້ານກີບ) ຕໍ່ຄັ້ງ;
8. ຍ້າຍສະຖານທີ່ຕັ້ງຮ້ານແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5.000.000 ກີບ (ຫ້າລ້ານກີບ) ຕໍ່ຄັ້ງ;
9. ມອບໃບອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາຂອງຕົນໃຫ້ບຸກຄົນອື່ນຢືມ ເພື່ອນໍາໃຊ້ໃນຈຸດປະສົງໃດກໍຕາມ ຈະຖືກປັບໃໝ 20.000.000 ກີບ (ຊາວລ້ານກີບ) ຕໍ່ຄັ້ງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ ມີປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ກົດລະບຽບຄຸ້ມຄອງຮ້ານແລກປ່ຽນເງິນຕາ ສະບັບເລກທີ 05/ທຫລ, ລົງວັນທີ 16 ພະຈິກ 2011.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ